# ADMINISTRATIVE REGULATION & DRAFT CONTRACT
# ກົດລະບຽບການບໍລິຫານ ແລະ ຮ່າງສັນຍາ ການປະມູນ

**Project:** Generating inclusive Resilience and Environment Enhancement (GREEN)
**Tender Reference/ ເອກະສານອ້າງອີງສໍາລັບການປະມູນ:** PSY-GR-001
**Issuing Authority:** Comité de Coopération avec le Laos (CCL)

## PART A: ADMINISTRATIVE REGULATION - ກົດລະບຽບໃນການບໍລິຫານການປະມູນ

### Article 1: Purpose of the Tender - ຈຸດປະສົງຂອງການປະມູນ

The purpose of this tender is to select a qualified Supplier for the supply and delivery of all materials, as specified in the Bill of Quantities (BoQ) and Material Technical Specification, for the construction of a gravity-fed water supply system in Vungdoy and Pjajen villages, Boun Neua district, Phongsaly province.

ຈຸດປະສົງຂອງການປະມູນນີ້ແມ່ນເພື່ອຄັດເລືອກຜູ້ສະໜອງທີ່ມີຄວາມສາມາດໃນການຕອບສະໜອງ ແລະ ຈັດສົ່ງວັດສະດຸທັງໝົດ ຕາມທີ່ໄດ້ລະບຸໄວ້ຢູ່ໃນໃບຄິດໄລ່ລາຄາ (BoQ) ແລະ ຂໍ້ມູນກໍານົດດ້ານເຕັກນິກຂອງວັດສະດຸ ສໍາລັບການກໍ່ສ້າງລະບົບນໍ້າລິນ ຢູ່ບ້ານວັງດອຍ ແລະ ບ້ານເພຍເຈນເກົ່າ, ເມືອງບຸນເໜືອ, ແຂວງຜົ້ງສາລີ.

### Article 2: Eligibility of Bidders - ຄຸນນະສົມບັດຂອງຜູ້ປະມູນ

Bidders must be legally constituted companies specializing in the supply of construction and water piping materials. They must provide:
ຜູ້ປະມູນຕ້ອງເປັນບໍລິສັດທີ່ປະກອບກິດຈະການຖືກຕ້ອງຕາມກົດໝາຍ ທີ່ມີຄວາມຊໍານານໃນການສະໜອງວັດສະດຸກໍ່ສ້າງ ແລະ ທໍ່ນໍ້າ ເຊິ່ງຜູ້ປະມູນຕ້ອງສະໜອງ:

- A copy of a valid business registration certificate.
- A company profile and history of similar supply contracts.
- Contact information for at least two references from previous clients.
- ສໍາເນົາໃບທະບຽນວິສາຫະກິດທີ່ຖືກຕ້ອງ.
- ປະຫວັດຂອງບໍລິສັດ ແລະ ປະຫວັດຂອງສັນຍາການສະໜອງທີ່ຄ້າຍຄືກັນ.
- ຂໍ້ມູນຕິດຕໍ່ສໍາລັບການອ້າງອີງຢ່າງໜ້ອຍສອງຄົນຈາກລູກຄ້າທີ່ຜ່ານມາ.

### Article 3: Tender document - ເອກະສານອ້າງອີງການປະມູນ

The complete tender file includes:
ເອກະສານການປະມູນທີ່ສົມບູນປະກອບມີ:

1. Cover Letter/ໜັງສືສະແດງເຈດຈໍານົງສະໝັກເຂົ້າປະມູນ
2. Administrative Regulation & Draft Contract (this document)/ກົດລະບຽບການບໍລິຫານ ແລະ ຮ່າງສັນຍາ ການປະມູນ (ເອກະສານສະບັບນີ້)
3. Bill of Quantities (BoQ) and GSP (Galvanized Steel Pipes) pipe cutting list /ໃບຄິດໄລ່ລາຄາ (BoQ) ແລະ ບັນຊີລາຍການຕັດທໍ່ເຫຼັກ (GSP)
4. Material Technical Specification/ຂໍ້ມູນກໍານົດດ້ານເຕັກນິກຂອງວັດສະດຸ

**Article 4: Clarifications and Inspection - ການຊີ້ແຈງ ແລະ ການກວດກາ**

- **Request for Clarification:** Bidders may submit any requests for clarification in writing to erwin.poligne@ccl-laos.org and robert.williamson@ccl-laos.org no later than **2 days before the submission deadline**.
- **ການຮ້ອງຂໍຄວາມກະຈ່າງແຈ້ງ:** ຜູ້ປະມູນສາມາດສົ່ງຄໍາຮ້ອງຂໍຄວາມກະຈ່າງແຈ້ງເປັນລາຍລັກອັກສອນມາທີ່ erwin.poligne@ccl-laos.org ແລະ robert.williamson@ccl-laos.org ບໍ່ເກີນ 2 ມື້ກ່ອນກໍານົດເວລາຍື່ນເອກະສານ.
- **Pre-Shipment Material Inspection (for the successful bidder):** Upon award of the contract, the Client reserves the right to conduct an inspection of the materials at the Supplier's premises or warehouse before they are shipped to the project sites. The purpose of this inspection is to verify the quality, quantity, and conformity of the materials with the Technical Specification before dispatch.
  **ການກວດກາວັດສະດຸກ່ອນການຂົນສົ່ງ ( ສໍາລັບຜູ້ຊະນະການປະມູນ):** ເມື່ອໄດ້ຮັບສັນຍາຊະນະການປະມູນ, ລູກຄ້າສະຫງວນສິດທີ່ຈະດໍາເນີນການກວດກາວັດສະດຸຢູ່ສະຖານທີ່ ຫຼື ສາງຂອງຜູ້ສະໜອງກ່ອນທີ່ຈະມີການສົ່ງໄປຫາສະຖານທີ່ຂອງໂຄງການ.ຈຸດປະສົງຂອງການກວດການີ້ແມ່ນເພື່ອກວດສອບຄຸນນະພາບ, ປະລິມານ ແລະ ຄວາມສອດຄ່ອງຂອງວັດສະດຸ ຕົງກັບຂໍ້ມູນກໍານົດດ້ານເຕັກນິກຂອງວັດສະດຸ ກ່ອນທີ່ຈະສົ່ງ.
  The Supplier shall agree with the Client on a mutually convenient date and time for this inspection before the contract is signed.
  ຜູ້ສະໜອງຈະຕ້ອງຕົກລົງເຫັນດີກັບລູກຄ້າໃນວັນ ແລະ ເວລາທີ່ສະດວກເຊິ່ງກັນແລະກັນເພື່ອດໍາເນີນການກວດກາວັດສະດຸກ່ອນຈະມີການເຊັນສັນຍາລະຫວ່າງສອງຝ່າຍ.
  The Supplier shall provide full access to the materials and all relevant documentation (e.g., mill certificates, test reports) during the inspection.
  ຜູ້ສະໜອງ ຕ້ອງສະໜອງອຸປະກອນໃຫ້ຄົບຖ້ວນຕາມຈໍານວນ ແລະ ເອກະສານທີ່ກ່ຽວຂ້ອງທັງໝົດ (ເຊັ່ນ: ໃບຢັ້ງຢືນໂຮງງານ, ບົດລາຍງານການທົດສອບ) ໃນລະຫວ່າງການກວດກາວັດສະດຸ.
  **Costs:** Any costs incurred for re-testing or re-inspection due to non-conformities found shall be borne by the Supplier.
  **ຄ່າໃຊ້ຈ່າຍ:** ທຸກຄ່າໃຊ້ຈ່າຍທີ່ເກີດຂຶ້ນສໍາລັບການກວດສອບຄືນໃຫມ່ຫຼືການກວດກາຄືນໃຫມ່ ເນື່ອງຈາກຄວາມບໍ່ສອດຄ່ອງຂອງວັດສະດຸທີ່ພົບເຫັນແມ່ນຜູ້ສະໜອງຈະຕ້ອງເປັນຜູ້ຮັບຜິດຊອບ.

**Article 5: Preparation and Submission of Tenders - ການກະກຽມ ແລະ ການຍື່ນເອກະສານປະມູນ**

**Language:** Tenders must be submitted in **English** and **lao.**
**ພາສາ:** ການປະມູນຕ້ອງສົ່ງສະບັບເປັນພາສາອັງກິດ ແລະ ພາສາລາວ.
**Currency:** Prices must be quoted in Lao Kip (₭).
**ສະກຸນເງິນ:** ລາຄາທີ່ລະບຸໃນໃບສະເໜີລາຄາຕ້ອງເປັນສະກຸນເງິນກີບ.
**Validity:** Tenders must remain **valid for a period of 30 days minimum** from the submission deadline.
**ໄລຍະເວລາປະມູນ:** ການປະມູນຕ້ອງມີຜົນສັກສິດຢ່າງໜ້ອຍເປັນໄລຍະເວລາ 30 ວັນນັບຕັ້ງແຕ່ມື້ຍື່ນຊອງສະເໜີ.
**Submission Methods/ວິທີການສົ່ງເອກະສານປະມູນ**

- **By Email (Preferred) as specified in the cover letter attached**
- **ສົ່ງທາງອີເມລ ຕາມທີ່ຢູ່ ທີ່ໄດ້ລະບຸໃນໜັງສືສະແດງເຈດຈໍານົງສະໝັກເຂົ້າປະມູນທີ່ຕິດຂັດມາພ້ອມນີ້.**
- **By Physical Delivery:** A sealed envelope delivered to **CCL headquarter, ASEAN road, House n'123, Unit 7 – Sidamdouane village – Chanthabouly District – BP 4792,**

**Vientiane capital,** clearly marked with the Tender Reference and "DO NOT OPEN BEFORE **Tuesday 21st October 2025 at 10:00 am".**

- **ສົ່ງທີ່ຫ້ອງການ: ປະທັບກາໃສ່ຫຼັງຊອງແລ້ວສົ່ງທີ່ຫ້ອງການອົງການ CCL, ຖະໜົນອາຊຽນ,** ເຮືອນເລກທີ: 123, ໜ່ວຍ 07, ບ້ານ ສີດຳດວນ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ **ລະບຸທີ່ຢູ່ຈະແຈ້ງ ດ້ວຍເອກະສານອ້າງອີງການປະມູນ ແລະ "ຫ້າມເປີດກ່ອນ ວັນອັງຄານ, ວັນທີ 21th ຕຸລາ 2025 ເວລ 10:00 ເຊົ້າ"**

**Deadline:** Tenders must be received no later than **Monday 20th October 2025 at 12:00 am.**
**ກຳນົດສົ່ງຊອງປະມູນ: ເອກະສານປະມູນຕ້ອງສົ່ງກ່ອນວັນຈັນ, ວັນທີ 20 ຕຸລາ 2025 ເວລາ 10:00 ເຊົ້າ**

## Article 6: Tender Opening and Evaluation - ມາດຕາ 6: ການເປີດຊອງປະມູນ ແລະ ການປະເມີນຜົນ

**Opening:** Tenders will be opened publicly on **Tuesday 21st October 2025 at 10:00 am** at **CCL Headquarter in Vientiane,** located (17.975719, 102.619709) and **CCL Office in Boun Neua** (21.658411, 101.898059).
**ເປີດຊອງປະມູນ:** ການເປີດຊອງປະມູນຈະຖືກເປີດເຜີຍຢ່າງເປັນທາງການຕໍ່ໜ້າຫຼາຍຄົນ ໃນວັນອັງຄານ, ວັນທີ 21 ຕຸລາ 2025 ເວລາ 10 ໂມງເຊົ້າ ທີ່ຫ້ອງການອົງການ CCL ສຳນັກງານໃຫຍ່ຢູ່ນະຄອນຫຼວງວຽງຈັນ ຕັ້ງຢູ່ (17.975719, 102.619709) ແລະ ຫ້ອງການໂຄງການຂອງອົງການ CCL ຢູ່ເມືອງ ບຸນເໜືອ (21.658411, 101.898059)
**Evaluation Criteria:** The contract will be awarded to the **economically most advantageous tender** based on the following criteria:
**ເງື່ອນໄຂການປະເມີນຜົນ:** ຜູ້ຊະນະການປະມູນແມ່ນຕ້ອງອີງຕາມເງື່ອນໄຂດັ່ງຕໍ່ໄປນີ້:

- **Technical Compliance & Quality (Weight: 40%):** Adherence to the Material Technical Specification, proposed material quality, and compliance with delivery timelines, **including the ability to fill the full BoQ.**
- **Price (Weight: 60%):** The total offered price for the BoQ.
- **ການປະຕິບັດຕາມດ້ານວິຊາການ & ຄຸນນະພາບ (ນ້ຳຫນັກ: 40%):** ກົງກັບຂໍ້ກຳນົດດ້ານວິຊາການຂອງວັດສະດຸ, ຄຸນນະພາບຂອງວັດສະດຸທີ່ສະເຫນີ ແລະ ປະຕິບັດຕາມກຳນົດເວລາການສົ່ງຊອງປະມູນ**, ລວມທັງຄວາມສາມາດໃນການຕື່ມຂໍ້ມູນໃສ່ໃນໃບຄິດໄລ່ລາຄາ BoQ ຢ່າງສົມບູນ.**
- **ດ້ານລາຄາ (ນ້ຳໜັກ: 60%):** ລາຄາທີ່ສະເໜີໃຫ້ທັງໝົດສຳລັບ **ໃບຄິດໄລ່ລາຄາ** BoQ

## Article 7: Award of Contract - ການໄດ້ຮັບສັນຍາ

The successful bidder will be notified by email. Upon notification, the successful bidder must sign the contract within 7 days. The Issuing Authority reserves the right to annul the tender process at any time without incurring any liability towards the bidders.
ຜູ້ຊະນະປະມູນຈະໄດ້ຮັບການແຈ້ງເຕືອນທາງອີເມວ. ຕາມແຈ້ງການ, ຜູ້ຊະນະປະມູນຕ້ອງເຊັນສັນຍາພາຍໃນ 7 ວັນ. ອົງການທີ່ອອກການປະມູນສະຫງວນສິດທີ່ຈະຍົກເລີກຂັ້ນຕອນການປະມູນໄດ້ທຸກເວລາ ໂດຍບໍ່ມີການຮັບຜິດຊອບໃດໆຕໍ່ຜູ້ປະມູນ.

## PART B: DRAFT CONTRACT FOR THE SUPPLY OF MATERIALS / ຮ່າງສັນຍາການສະໜອງວັດສະດຸ

**ລະຫວ່າງ:**

**Comité Between:/de Coopération (CCL),** hereinafter referred to as "the Client",/ ອົງການຮ່ວມມືກັບປະເທດລາວ**(CCL)** ເຊິ່ງຕໍ່ໄປນີ້ເອີ້ນວ່າລູກຄ້າ;

**And:/ແລະ**

___________________________, hereinafter referred to as "the Supplier",/ເຊິ່ງຕໍ່ໄປນີ້ເອີ້ນວ່າ ຜູ້ສະໜອງ;

**Preamble/ສະຫຼຸບຫຍໍ້**

This Contract is based on the Tender Dossier referenced /ສັນຍາສະບັບນີ້ແມ່ນອີງໃສ່ໜັງສືແຈ້ງປະມູນອ້າງອີງເລກທີ _________________________ and the Supplier's tender dated/ແລະ ຜູ້ປະມູນສະໜອງວັດສະດຸລົງວັນທີ _________________________.

### Article 1: Subject of the Contract - ຫົວຂໍ້ຂອງສັນຍາ

The Supplier agrees to supply, and the Client agrees to purchase, all materials detailed in the Bill of Quantities (BoQ) and Material Technical Specification, delivered to the specified sites in Vungdoy and Pjajen villages.

ຜູ້ສະໜອງຕົກລົງທີ່ຈະສະໜອງ ແລະ ລູກຄ້າຕົກລົງທີ່ຈະຊື້ວັດສະດຸ, ວັດສະດຸທັງຫມົດທີ່ມີລາຍລະອຽດຢູ່ໃນໃບຄິດໄລລາຄາ (BoQ) ແລະ ຂໍ້ມູນສະເພາະດ້ານວິຊາການວັດສະດຸແມ່ນຕ້ອງສົ່ງໄປສະຖານທີ່ ທີ່ກຳນົດໄວ້ຄືບ້ານວັງດອຍ ແລະ ບ້ານ ເຜຍເຈັນເກົ່າ.

### Article 2: Contract Price and Payment Terms - ລາຄາສັນຍາ ແລະ ເງື່ອນໄຂການຈ່າຍ

- The total fixed contract price is /ລາຄາສັນຍາຄົງທີ່ທັງໝົດຈຳນວນ___________________________ Kip (including taxes/ລວມທັງພາສີ).
- **Payment:/ການຈ່າຍ**
  - 100% upon delivery, after inspection and approval of all materials by the client, verified by a delivery note signed by the Client's representative.
  - ເມື່ອການຈັດສົ່ງວັດສະດຸເຖິງສະຖານທີ່ສຳເລັດ 100 ເປີເຊັນ ເຊັ່ນລູກຄ້າ ກວດກາ, ຢັ້ງຢືນ ແລະ ຕ່າງໜ້າລູກຄ້າ ແລະ ພາກສ່ວນກ່ຽວຂ້ອງເຊັນຮັບເອກະສານນຳສົ່ງວັດສະດຸ.

### Article 3: Delivery and Terms - ເງື່ອນໄຂການຈັດສົ່ງ

- **Delivery Location:** All materials must be delivered to:/ສະຖານທີ່ຈັດສົ່ງວັດສະດຸ: ວັດສະດຸທັງໝົດຕ້ອງຖືກຈັດສົ່ງໄປ:
  - Ban Vungdoy (21.45136, 101.8692), Boun Neua District, Phongsaly Province.
  - Ban Pjajen (21.47085, 101.81600), Boun Neua District, Phongsaly Province.
  - ບ້ານ ວັງດອຍ (21.45136, 101.8692), ເມືອງ ບຸນເໜືອ, ແຂວງຜົ້ງສາລີ.
  - ບ້ານ ເຜັນເຈັນ (21.47085, 101.81600), ເມືອງ ບຸນເໜືອ, ແຂວງຜົ້ງສາລີ.
- **Delivery Date:** All materials must be delivered on or before/**ວັນທີການຈັດສົ່ງ:** ວັດສະດຸທັງໝົດຕ້ອງຖືກຈັດສົ່ງໃນວັນທີ ຫຼືກ່ອນ _______________________________________________
- **Risk and Ownership:** The risk of loss of or damage to the materials shall pass from the Supplier to the Client upon acceptance at the delivery site. Ownership passes upon full payment.

- **ຄວາມສ່ຽງ ແລະ ຄວາມຮັບຜິດຊອບ:** ຄວາມສ່ຽງຂອງການສູນເສຍຫຼືຄວາມເສຍຫາຍຕໍ່ກັບວັດສະດຸທີ່ເກີດຈາກຜູ້ສະໜອງຈັດເຖິງລູກຄ້າຢູ່ສະຖານທີ່ຈັດສົ່ງ. ຜູ້ສະໜອງຕ້ອງຮັບຜິດຊອບຄ່າໃຊ້ຈ່າຍທັງໝົດຕໍ່ກັບວັດສະດຸທີ່ສູນເສຍ ແລະ ເປ່ເພ.

**Article 4: Responsibilities of the Supplier - ຄວາມຮັບຜິດຊອບຂອງຜູ້ສະໜອງ**

The Supplier shall:/ ຜູ້ສະໜອງ:

- Supply all materials in accordance with the quality standards, specifications, and quantities in the BoQ and Material Technical Specification.
- ຕ້ອງສະໜອງວັດສະດຸທັງໝົດຕາມມາດຕະຖານຄຸນນະພາບ, ຂໍ້ມູນສະເພາະດ້ານວິຊາການວັດສະດຸ ແລະ ຈຳນວນຢູ່ໃນໃບຄິດໄລ່ລາຄາ (BoQ) ແລະຂໍ້ກຳນົດດ້ານວິຊາການວັດສະດຸ.
- Ensure all **GSP pipes are pre-cut and threaded** as per the separate cutting list **before shipment**.
- ຕ້ອງຮັບປະກັນວ່າ ທໍ່ເຫຼັກ (GSP) **ທັງໝົດທີ່ກຳນົດໃຫ້ຕັດ ແລະ ສ່ຽນກ່ອນລ່ວງໜ້າໂດຍເຮັດເປັນລາຍການຕັດແຍກອອກຕ່າງຫາກກ່ອນການຈັດສົ່ງ.**
- **Package all materials suitable** for transport to prevent damage.
- ຕ້ອງມີການຫຸ້ມຫໍ່ວັດສະດຸທັງໝົດຢ່າງເໝາະສົມກ່ອນການຂົນສົ່ງເພື່ອປ້ອງກັນຄວາມເສຍຫາຍ.
- Provide, upon request, **certificates of conformity or test reports** for key items (cement, steel bars, pipes).
- ຕ້ອງມອບໃບຢັ້ງຢືນການກວດກາສິນຄ້າ (ໃບນຳສົ່ງສິນຄ້າ) ຫຼື ບົດລາຍງານການທົດສອບສຳລັບລາຍການທີ່ສຳຄັນ( ຊີມັງ, ເຫຼັກເສັ້ນ, ທໍ່ນ້ຳ).
- Be **responsible for any delays**, non-conformities, or missing items.
- ຕ້ອງຮັບຜິດຊອບສຳການຈັດສົ່ງຫລ້າຊ້າ, ຄວາມບໍ່ສອດຄ່ອງຂອງວັດສະດຸ ຫຼື ລາຍການເສຍຫາຍ

**Article 5: Responsibilities of the Client - ຄວາມຮັບຜິດຊອບຂອງລູກຄ້າ**

The Client shall:/ ລູກຄ້າຕ້ອງ

Make the site accessible for delivery. / ເຮັດສະຖານທີ່ໃຫ້ສາມາດເຂົ້າເຖິງໄດ້ສຳລັບການຈັດສົ່ງວັດສະດຸ.

- Designate a representative to receive the goods and sign the delivery note.
- Make payments according to the agreed schedule.
- Inform the Supplier of any specific delivery instructions.
- ແຕ່ງຕັ້ງຕົວແທນເພື່ອຮັບສິນຄ້າ ແລະ ເຊັນຮັບໃບນຳສົ່ງສິນຄ້າ.
- ຊຳລະຕາມກຳນົດເວລາທີ່ໄດ້ຕົກລົງກັນ.
- ແຈ້ງຄຳແນະນຳໃນການຈັດສົ່ງວັດສະດຸໃຫ້ຜູ້ສະໜອງຮັບຊາບ.

**Article 6: Warranties - ການຮັບປະກັນ**

The Supplier warrants that **all materials supplied are new**, **unused**, of merchantable quality, and **fit for their intended purpose**. This **warranty** shall remain in effect for a period of **12 months** from the date of final delivery. Any **defective material shall be repaired or replaced by the Supplier at no cost to the Client.**

ຜູ້ສະໜອງຕ້ອງຮັບປະກັນວ່າວັດສະດຸທັງໝົດທີ່ສະໜອງໃຫ້ເປັນວັດສະດຸໃໝ່, ບໍ່ໄດ້ນຳໃຊ້ມາກ່ອນ, ມີຄຸນນະພາບພ້ອມໃຊ້ງານ ແລະ ເໝາະສົມກັບຈຸດປະສົງໃນການໃຊ້ງານ. ການຮັບປະກັນນີ້ມີຜົນບັງຄັບໃຊ້ເປັນໄລຍະເວລາ 12 ເດືອນນັບຈາກວັນທີຈັດສົ່ງມອບສິນຄ້າຄັ້ງສຸດທ້າຍ. ວັດສະດຸໃດໆທີ່ຜິດປົກກະຕິຈະຖືກສ້ອມແປງຫຼືປ່ຽນແທນຄືນໂດຍຜູ້ສະໜອງໂດຍບໍ່ມີຄ່າໃຊ້ຈ່າຍໃດໆຈາກລູກຄ້າ.

## Article 7: Liquidated Damages - ການປັບໄໝຄ່າເສຍຫາຍໃນການຈັດສົ່ງວັດສະດຸຫລ້າຊ້າກວ່າກຳນົດ

- **For Delay:** If the Supplier fails to deliver on time, the Supplier shall pay liquidated damages at a rate of 0.5% of the total contract price per week of delay, up to a maximum of 10% of the total contract price.
- **For Non-Conformity:** Materials not conforming to specifications may be rejected. The Client may, at its discretion, demand replacement or a price reduction.
- **ສຳລັບການຈັດສົ່ງວັດສະດຸຫລ້າຊ້າ:** ຖ້າຜູ້ສະໜອງສິ່ງສິນຄ້າບໍ່ທັນເວລາ, ຜູ້ສະໜອງຕ້ອງຈ່າຍຄ່າເສຍຫາຍໃນອັດຕາ 0.5% ຂອງລາຄາສັນຍາທັງໝົດຕໍ່ອາທິດຂອງການຊັກຊ້າ, ສູງສຸດ 10% ຂອງລາຄາສັນຍາທັງໝົດ.
- **ສຳລັບຄວາມບໍ່ສອດຄ່ອງຂອງການສະໜອງວັດສະດຸ:** ວັດສະດຸທີ່ບໍ່ສອດຄ່ອງກົງກັບຂໍ້ມູນທາງດ້ານເຕັກວິຊາການອາດຈະຖືກປະຕິເສດ. ລູກຄ້າອາດສາມາດຂໍປ່ຽນວັດສະດຸໃໝ່ ຫຼື ຫຼືການຫຼຸດລາຄາລົງໄດ້ຕາມການຕັດສິນໃຈຂອງຕົນ.

## Article 8: Termination - ການຢຸດສັນຍາ

The Client may terminate this contract if:/ລູກຄ້າອາດຈະຍົກເລີກສັນຍານີ້ໄດ້ຖ້າຫາກວ່າ:

- The Supplier becomes bankrupt or insolvent.
- The Supplier fails to deliver a major part of the materials by the delivery date.
- The Supplier fails to remedy a material breach of contract within 14 days of receiving a written notice.
- The quality of the materials differs from initial quotation.
- ຜູ້ສະໜອງປະກາດລົ້ມລະລາຍ ຫຼື ມີໜີ້ສິນເກີນຕົວ.
- ຜູ້ສະໜອງບໍ່ສາມາດຈັດສົ່ງສ່ວນສຳຄັນຂອງວັດສະດຸພາຍໃນມື້ຈັດສົ່ງທີ່ກຳນົດໄວ້.
- ຜູ້ສະໜອງບໍ່ສາມາດແກ້ໄຂການລະເມີດສັນຍາພາຍໃນ 14 ມື້ຫຼັງຈາກໄດ້ຮັບແຈ້ງການເປັນລາຍລັກອັກສອນ.
- ຄຸນນະພາບຂອງວັດສະດຸແຕກຕ່າງຈາກໃບສະເໜີລາຄາໃນເບື້ອງຕົ້ນ.

## Article 9: Force Majeure - ເຫດສຸດວິໄສ

Neither party shall be liable for any failure or delay in performing its obligations due to events beyond its reasonable control (e.g., natural disasters, war, acts of government). The affected party must notify the other party promptly.

ທັງສອງຝ່າຍຈະຕ້ອງບໍ່ຮັບຜິດຊອບຕໍ່ຄວາມລົ້ມເຫລວ ຫຼື ຄວາມຊັກຊ້າໃນການປະຕິບັດພັນທະຂອງຕົນ ເນື່ອງຈາກເຫດການທີ່ເກີນການຄວບຄຸມທີ່ສົມເຫດສົມຜົນ (ເຊັ່ນ: ໄພພິບັດທຳມະຊາດ, ສົງຄາມ, ການກະທຳຂອງລັດຖະບານ). ຝ່າຍທີ່ໄດ້ຮັບຜົນກະທົບຕ້ອງແຈ້ງໃຫ້ຝ່າຍອື່ນຮັບຊາບທັນທີ.

## Article 10: Governing Law and Dispute Resolution - ກົດໝາຍວ່າດ້ວຍການປົກຄອງ ແລະ ການແກ້ໄຂຂໍ້ຂັດແຍ່ງ

This contract shall be governed by the laws of the Lao People's Democratic Republic. Any dispute shall be settled amicably through negotiation. If unresolved, the dispute shall be referred to the competent courts of the Lao People's Democratic Republic.
ສັນຍາສະບັບນີ້ ຈະຢູ່ພາຍໃຕ້ກົດໝາຍຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ. ຖ້າຫາກເກີດຂໍ້ຂັດແຍ້ງໃດໆແມ່ນຈະໄດ້ຮັບການແກ້ໄຂດ້ວຍການເຈລະຈາຢ່າງສັນຕິວິທີ. ຖ້າຫາກບໍ່ໄດ້ຮັບການແກ້ໄຂ, ຂໍ້ຂັດແຍ່ງຈະຖືກສົ່ງໄປຍັງສານທີ່ມີອຳນາດຂອງສາທາລະນະລັດປະຊາທິປະໄຕປະຊາຊົນລາວ.

**Article 11: Special Conditions - ເງື່ອນໄຂພິເສດ**

- **Village Contribution:** Items marked as "VILLAGE CONTRIBUTION" in the BoQ are expressly excluded from this contract. The Supplier is not responsible for supplying these items but has only to fill the unit price.
- **ການປະກອບສ່ວນຂອງບ້ານ:** ລາຍການທີ່ໝາຍເປັນ "ການປະກອບສ່ວນຂອງບ້ານ" ຢູ່ໃນໃບຄິດໄລ່ລາຄາ (BoQ) ແມ່ນຈະບໍ່ລວມຢູ່ໃນສັນຍາສະບັບນີ້. ຜູ້ສະໜອງບໍ່ອະນຸຍາດໃຫ້ສະໜອງສິນຄ້າເຫຼົ່ານີ້ ພຽງແຕ່ຕື່ມລາຄາຫົວໜ່ວຍທີ່ມີຢູ່ໃນໃບຄິດໄລ່ລາຄານີ້ເທົ່ານັ້ນ.
- **Confidentiality:** The Supplier agrees to treat all project designs and documents as confidential, in case he requests any design or additional documents that could improve his offer.
- **ຄວາມລັບ:** ຜູ້ສະໜອງຕົກລົງທີ່ຈະປະຕິບັດຕາມການອອກແບບ ແລະ ເອກະສານໂຄງການທັງໝົດເປັນຄວາມລັບ, ຍົກເວັ້ນໃນກໍລະນີທີ່ມີການຂໍເບິ່ງການອອກແບບ ຫຼື ເອກະສານເພີ່ມເຕີມທີ່ສາມາດປັບປຸງຂໍ້ສະເໜີຂອງຕົນ.

For and on behalf of **Comité de Coopération avec le Laos (CCL):**
**ສໍາລັບ ແລະ ໃນນາມອົງການຮ່ວມມືກັບປະເທດລາວ (ຊີຊີແອວ):**

**Name/ຊື່:** **Seal and signature: / ປະທັບຕາ ແລະ ລາຍເຊັນ**

**Title/ຫົວຂໍ້:**

**Date/ວັນທີ:**

For and on behalf of **[Supplier's Company Name]** :

ສໍາລັບ ແລະ ໃນນາມຂອງ **[ຊື່ບໍລິສັດຂອງຜູ້ສະໜອງ]**

**Name/ຊື່:** **Seal and signature: / ປະທັບຕາ ແລະ ລາຍເຊັນ**

**Title/ຫົວຂໍ້:**

**Date/ວັນທີ:**